ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ວັນຊາດ ທີ 2 ທັນວາ
# ເປັນວັນປະຫວັດສາດ ທີ່ທົ່ວປວງຊົນລາວທັງຊາດບໍ່ອາດຈະຫຼົງລືມໄດ້




ເນື່ອງໃນໂອກາດວັນຊາດທີ 2 ທັນວາ ຄົບຮອບ 49 ປີ (2 ທັນວາ 1975 – 2 ທັນວາ 2024), ທ່ານ ນ. ຂັນແກ້ວ ຫຼ້າມະນີເງົາ ກຳມະການປະຈຳພັກ, ປະທານຄະນະກວດກາພັກ, ຮອງຜູ້ວ່າການ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຕາງໜ້າຄະນະບໍລິຫານງານພັກ-ຄະນະຜູ້ວ່າການ ທຫລ ແລະ ຖັນແຖວສະມາຊິກພັກ-ພະນັກງານທົ່ວຂະແໜງທະນາຄານ ຂໍສະແດງຄວາມຮູ້ສຶກຕໍ່ວັນສຳຄັນປະຫວັດສາດດັ່ງກ່າວຄືດັ່ງນີ້: **ວັນຊາດ ທີ 2 ທັນວາ** ເປັນວັນທີ່ມີຄວາມໝາຍສຳຄັນຂອງ ທົ່ວພັກ ທົ່ວລັດ ແລະ ທົ່ວປວງຊົນລາວທັງຊາດ. ພາຍຫຼັງທີ່ປະເທດຊາດໄດ້ຮັບການປົດປ່ອຍ ແລະ ສະຖາປະນາເປັນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ພັກ-ລັດ ໄດ້ນຳພາທົ່ວປວງຊົນລາວທັງຊາດ ຈັດຕັ້ງປະຕິບັດ 2 ໜ້າທີ່ຍຸດທະສາດ ຄື: **ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ** ເວົ້າລວມ, ເວົ້າສະເພາະຢູ່ຂະແໜງທະນາຄານ, ພັກ-ລັດໄດ້ນຳພາການປະຕິບັດໜ້າທີ່ການເມືອງຕົ້ນຕໍຂອງທະນາຄານ ໂດຍສະເພາະການຄຸ້ມຄອງມະຫາພາກທາງດ້ານເງິນຕາ ໃຫ້ມີສະຖຽນລະພາບ, ຄຸ້ມຄອງສະຖາບັນການເງິນ ໃຫ້ມີຄວາມໝັ້ນຄົງ ແລະ ຄຸ້ມຄອງລະບົບການຊຳລະ ໃຫ້ມີປະສິດທິພາບ.

ສະນັ້ນ, ເພື່ອເປັນການຢັ້ງຢືນຜົນງານຂອງຂະແໜງທະນາຄານ ທີ່ໄດ້ປະກອບສ່ວນໃນໄລຍະຜ່ານມາ ໂດຍສະເພາະເນື່ອງໃນວັນຊາດທີ 2 ທັນວາ ຄົບຮອບ 49 ປີ ໃນປີ 2024 ນີ້, ຂ້າພະເຈົ້າຂໍສະເໜີໝາກຜົນຢູ່ຂະແໜງທະນາຄານທີ່ໄດ້ປະກອບສ່ວນເຂົ້າໃນການສ້າງສາພັດທະນາເສດຖະກິດ-ສັງຄົມຕະຫຼອດໄລຍະປີ 2024 ຄື: ໃນໄລຍະ 1 ປີຜ່ານມາ, ການປະຕິບັດໜ້າທີ່ການເມືອງ ຂອງຂະແໜງທະນາຄານ ໄດ້ປະເຊີນໜ້າກັບສິ່ງທ້າທາຍຫຼາຍດ້ານ ທັງຈາກປັດໄຈພາຍໃນ ແລະ ພາຍນອກ ໂດຍສະເພາະຄວາມຜັນຜວນທາງດ້ານອັດຕາແລກປ່ຽນໃນຕະຫຼາດສາກົນ, ບັນຫາຄວາມບໍ່ສົມດຸນລະຫວ່າງຄວາມຕ້ອງການ ແລະ ການສະໜອງເງິນຕາຕ່າງປະເທດ ພາຍໃນ ສປປ ລາວ ຊຶ່ງເຮັດໃຫ້ເງິນກີບ ສືບຕໍ່ອ່ອນຄ່າໃນລະບົບເສດຖະກິດ, ບວກກັບສະພາບໂຄງສ້າງເສດຖະກິດມະຫາພາກຂອງປະເທດ ຍັງຂາດຄວາມສົມດຸນທາງດ້ານການຜະລິດ, ມີການເພິ່ງພາການນຳເຂົ້າ ເປັນຫຼັກ ແລະ ສະພາບຄວາມຕ້ອງການເງິນຕາຕ່າງປະເທດ ເພື່ອຊຳ

ລະພັນທະໜີ້ສິນ; ບັນຫາເຫຼົ່ານີ້ ໄດ້ສົ່ງຜົນເຮັດໃຫ້ການກຳນົດນະໂຍບາຍ ແລະ ມາດຕະການຕ່າງໆຂອງ ທຫລ ຍັງພົບຄວາມຫຍຸ້ງຍາກ ແລະ ເປັນສິ່ງທ້າທາຍຫຼາຍໃນການຄຸ້ມຄອງມະຫາພາກທາງດ້ານເງິນຕາ, ຄຸ້ມຄອງສະຖາບັນການເງິນ ແລະ ຄຸ້ມຄອງລະບົບການຊຳລະ ໃຫ້ມີຄວາມໜັກແໜ້ນ-ເຂັ້ມແຂງຢ່າງແທ້ຈິງ.

ເພື່ອເຮັດໃຫ້ການປະຕິບັດໜ້າທີ່ການເມືອງຂອງ ທຫລ, ບັນລຸລະດັບຄາດໝາຍທີ່ວາງໄວ້, ທຫລ ໄດ້ສືບຕໍ່ດຳເນີນນະໂຍບາຍເງິນຕາໃຫ້ຮັດກຸມຫຼາຍຂຶ້ນ, ໄດ້ປະຕິບັດຫຼາຍເຄື່ອງມືນະໂຍບາຍເງິນຕາ, ປັບປຸງກົນໄກການກຳນົດ ແລະ ຄຸ້ມຄອງອັດຕາແລກປ່ຽນ ໃຫ້ມີຄວາມຍືດຍຸ່ນກ່ວາເກົ່າ, ປັບປຸງກົນໄກການສະໜອງເງິນຕາຕ່າງປະເທດ ໂດຍສະເພາະໄດ້ພັດທະນາລະບົບການຊື້-ຂາຍເງິນຕາຕ່າງປະເທດ (Lao Foreign Exchange = LFX) ເພື່ອດຶງເອົາການແລກປ່ຽນໃຫ້ເຂົ້າສູ່ລະບົບ ແລະ ເຮັດໃຫ້ທົ່ວສັງຄົມ ເຂົ້າເຖິງການແລກປ່ຽນເງິນຕາໄດ້ສະດວກຍິ່ງຂຶ້ນ, ປັບປຸງກົນໄກການຄຸ້ມຄອງເງິນຕາຕ່າງປະເທດ ຈາກການສົ່ງອອກໂດຍສະເພາະໄດ້ອອກຂໍ້ຕົກລົງວ່າດ້ວຍການຄຸ້ມຄອງລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກສິນຄ້າ ແລະ ການບໍລິການສະບັບເລກທີ 333/ທຫລ ລົງວັນທີ 7 ມີນາ 2024; ປັບປຸງກົນໄກການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ ໃຫ້ສອດຄ່ອງ ແລະ ເຂັ້ມແຂງ ຕາມຫຼັກການສາກົນ, ຄຽງຄູ່ກັບການພັດທະນາພື້ນຖານໂຄງລ່າງໃນການຊຳລະ ໃຫ້ທັນສະໄໝ, ປັບປຸງກົດໝາຍວ່າດ້ວຍລະບົບການຊຳລະ, ພັດທະນາແອັບພຣິເຄຊັນ ອີຊີກີບ (EZY kip) ເພື່ອອຳນວຍຄວາມສະດວກໃຫ້ນັກທ່ອງທ່ຽວ ສາມາດຊຳລະຄ່າສິນຄ້າ ແລະ ຄ່າບໍລິການ ຜ່ານລາວຄິວອາໂຄດ (Lao QR Code), ເຊື່ອມລະບົບການຊຳລະ ທັງພາຍໃນ ແລະ ບັນດາປະເທດເພື່ອນບ້ານ ຈາກການອອກແຮງປະຕິບັດໜ້າທີ່ການເມືອງທັງໝົດເຫຼົ່ານັ້ນ ໄດ້ເຮັດໃຫ້ ທຫລ ສາມາດຮັກສາສະຖຽນລະພາບທາງດ້ານເງິນຕາ ໃຫ້ມີທ່າອ່ຽງທີ່ດີຂຶ້ນທຽບໃສ່ປີຜ່ານມາ, ສະແດງອອກຄື: ອັດຕາເງິນເຟີ້ຢູ່ໃນທ່າອ່ຽງທີ່ຫຼຸດລົງ ຈາກ 24.44% ໃນຕົ້ນປີ ມາເປັນ 18.3% ໃນເດືອນ ພະຈິກ 2024; ສາມາດຄວບຄຸມປະລິມານເງິນ M2 ໃຫ້ຢູ່ໃນລະດັບບໍ່ເກີນ 25%; ອັດຕາແລກປ່ຽນອ່ອນຄ່າໜ້ອຍລົງ ທຽບໃສ່ປີຜ່ານມາຄື: ເງິນກີບອ່ອນຄ່າ 13.01%ທຽບໂດລາ ແລະ 15.06% ທຽບກັບບາດ ຈາກເມື່ອກ່ອນອ່ອນຄ່າ 23.46% ທຽບໂດລາ ແລະ 22.63% ທຽບກັບບາດ; ຍອດເງິນຝາກ ກວມເອົາ 98.60% ຂອງ GDP ແລະ ສິນເຊື່ອ ກວມເອົາ 64.18% ຂອງ GDP ຊຶ່ງສາມາດຂະຫຍາຍຕົວໄດ້ຕາມແຜນການທີ່ກຳນົດໄວ້; ທຫລ ສາມາດຄຸ້ມຄອງລາຍຮັບຈາກການສົ່ງອອກ ທີ່ເປັນເງິນຕາຕ່າງປະເທດ ເຂົ້າມາຜ່ານລະບົບທະນາຄານໄດ້ 70.56% ຂອງການສົ່ງອອກທັງໝົດ; ລະບົບການເງິນ ແລະ ການຊຳລະ ແມ່ນມີຄວາມໝັ້ນຄົງ, ປອດໄພຮອບດ້ານ.

ຄຽງຄູ່ກັບຜົນສຳເລັດເບື້ອງຕົ້ນທີ່ຍາດມາໄດ້ນັ້ນ, ຂະແໜງທະນາຄານຍັງຈະຕ້ອງສືບຕໍ່ສູ້ຊົນຈັດຕັ້ງປະຕິບັດວຽກງານຈຸດສຸມຈຳນວນໜຶ່ງ ຕາມມະຕິຂອງພັກ, ມະຕິຂອງສະພາແຫ່ງຊາດ ກໍ່ຄືການຊີ້ນຳຂອງລັດຖະບານໃນແຕ່ລະໄລຍະ ຊຶ່ງໃນປີ 2025 ຈະສືບຕໍ່ລົງເລິກໃນບາງວຽກຈຸດສຸມຕົ້ນຕໍຄື: ການແກ້ໄຂບັນຫາເງິນເຟີ້ ເພາະເຖິງວ່າຈະຢູ່ໃນທ່າອ່ຽງຫຼຸດລົງແຕ່ກໍ່ຍັງຢູ່ໃນລະດັບສູງ; ຄຸ້ມຄອງອັດຕາແລກປ່ຽນໃຫ້ໝັ້ນຄົງຢູ່ໃນລະດັບບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້; ຄຸ້ມຄອງປະລິມານເງິນ M2 ໃຫ້ຂະຫຍາຍຕົວບໍ່ເກີນ 20% ທຽບໃສ່ປີຜ່ານມາ; ຄັງສຳຮອງເງິນຕາຕ່າງປະເທດສາມາດກຸ້ມການນຳເຂົ້າໄດ້ຢ່າງໜ້ອຍ 5 ເດືອນ; ຍອດເຫຼືອເງິນຝາກຂອງທະນາຄານທຸລະກິດ ກວມເອົາ 110% ຂອງ GDP; ຍອດເຫຼືອສິນເຊື່ອຂອງຂະແໜງທະນາຄານ ກວມເອົາ 62% ຂອງ GDP; ຄວບຄຸມອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPL) ສະເລ່ຍໃຫ້ຢູ່ໃນລະດັບບໍ່ເກີນ 3% ຂອງຍອດສິນເຊື່ອທັງໝົດ; ຄຸ້ມຄອງລາຍຮັບຈາກການສົ່ງອອກ ຜ່ານລະບົບທະນາຄານ ໃຫ້ໄດ້ບໍ່ຫຼຸດ 75% ຂອງການສົ່ງອອກທັງໝົດ.

ເນື່ອງໃນໂອກາດ ວັນຊາດທີ 2 ທັນວາ ທີ່ໄດ້ໝູນວຽນມາບັນຈົບຄົບຮອບ 49 ປີໃນປີນີ້, ຂ້າພະເຈົ້າຂໍຕາງໜ້າຄະນະພັກ-ຄະນະນຳ ພ້ອມດ້ວຍສະມາຊິກພັກ-ພະນັກງານທັງໝົດຂອງຂະແໜງທະນາຄານ ຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງ ມາຍັງການນຳພັກ-ລັດນັບແຕ່ລຸ້ນອະດີດຈົນເຖິງລຸ້ນປັດຈຸບັນ ທີ່ໄດ້ເສຍສະຫຼະຊີວິດເລືອດເນື້ອ, ທຸ້ມເທເຫື່ອແຮງ-ສະຕິປັນຍາ ເພື່ອອຸດົມການຂອງພັກ ແລະ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳ ຂະແໜງທະນາຄານ ຢ່າງໃກ້ຊິດໂດຍຕະຫຼອດມາ ຈົນເຮັດໃຫ້ຂະແໜງທະນາຄານຂອງພວກເຮົາ ສາມາດນຳພາຈັດຕັ້ງປະຕິບັດໜ້າທີ່ການເມືອງຂອງຕົນ ໄດ້ສຳເລັດໃນຫຼາຍໆດ້ານ. ໃນໂອກາດອັນມີຄວາມ ໝາຍສຳຄັນນີ້, ອີກເທື່ອໜຶ່ງ ໃນນາມຕາງໜ້າຂະແໜງທະນາຄານ ກໍ່ຄືໃນນາມສ່ວນຕົວ, ຂ້າພະເຈົ້າ ຂໍອວຍພອນໄຊອັນປະເສີດມາຍັງບັນດາທ່ານຜູ້ນຳພັກ-ລັດ ຈົ່ງມີສຸຂະພາບແຂງແຮງ, ມີຄວາມຜາສຸກໃນຊີວິດສ່ວນຕົວ-ຄອບຄົວ, ມີຜົນສຳເລັດອັນຍິ່ງໃຫຍ່ໃນການນຳພາປະຕິບັດໜ້າທີ່ການເມືອງຂອງຕົນຢ່າງຈົບງາມ ໂດຍສະເພາະສືບຕໍ່ນຳພາພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ໃຫ້ໄປເຖິງຈຸດໝາຍປາຍທາງທີ່ພັກ-ລັດ ໄດ້ກຳນົດໄວ້ທຸກປະການ.

## ນ້ຳໃຈວັນຊາດທີ 2 ທັນວາ ໝັ້ນຍືນ !